ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ສຳນັກງານໃຫຍ່ ເລກທີ: 006 /ທຄຕລ.2019

ນະຄອນຫຼວງວຽງຈັນ, ວັນທີ: 01 FEB 2019

# ຂໍ້ຕົກລົງ
# ວ່າດ້ວຍການແຕ່ງຕັ້ງພະນັກງານ

- ອີງຕາມລະບຽບຕຳແໜ່ງງານ, ມາດຖານເງື່ອນໄຂຂອງຕຳແໜ່ງງານ ແລະ ຂັ້ນຕອນການແຕ່ງຕັ້ງ-ສັບຊ້ອນພະນັກງານ ທຄຕລ (ສະບັບປັບປຸງປີ 2018) ສະບັບເລກທີ 030/ທຄຕລ.2018 ລົງວັນທີ 05/11/2018;
- ອີງຕາມໜັງສືແຈ້ງຕອບຂອງກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 10/ກຈພ ລົງວັນທີ **11/01/2019**;
- ອີງຕາມການຕົກລົງເຫັນດີເປັນເອກະພາບຂອງ ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຄັ້ງວັນທີ **29/01/2019.**

**ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ:**

**ມາດຕາ 01:** ແຕ່ງຕັ້ງ **ທ່ານ ວຽງສຸກ ຈຸນທະວົງ** ຫົວໜ້າພະແນກຄຸ້ມຄອງສິນເຊື່ອ ໃຫ້ເປັນ **ຮອງຜູ້ອຳນວຍການໃຫຍ່ ທຄຕລ**, ນັບແຕ່ວັນທີ **18/02/2019** ເປັນຕົ້ນໄປ.

**ມາດຕາ 02:** ທ່ານທີ່ຖືກແຕ່ງຕັ້ງດັ່ງກ່າວກ່ອນຈະໄປຮັບໜ້າທີ່ວຽກງານໃໝ່ ໃຫ້ມອບວຽກທີ່ຕົນຮັບຜິດຊອບຄືນໃຫ້ການຈັດຕັ້ງບ່ອນສັງກັດປະຈຸບັນ ແລະ ຄະນະພະແນກ ທີ່ຕົນສັງກັດເປັນທີ່ຮຽບຮ້ອຍເສຍກ່ອນ ເພື່ອຈະໄດ້ມອບໃຫ້ຜູ້ຮັບຊ່ວງຕໍ່ໄປ.

**ມາດຕາ 03:** ຄະນະອຳນວຍການ, ພະແນກຈັດຕັ້ງ-ພະນັກງານ, ທຸກພາກສ່ວນທີ່ກ່ຽວຂ້ອງ, ທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 04:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຂົງ ຈັນທະຈັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຊີວະປະຫວັດຫຍໍ້ພະນັກງານ ທຄຕລ



## 1. ຂໍ້ມູນສ່ວນຕົວ

- ຊື່ ແລະ ນາມສະກຸນ: **ວຽງສຸກ ຈູນທະວົງ**
- ວັນ ເດືອນ ປີເກີດ: 15/08/1964
- ສັນຊາດ: ລາວ
- ພາສາຕ່າງປະເທດ: ອັງກິດ ແລະ ເຊັກໂກ
- ຕຳແໜ່ງ: ຮອງຜູ້ອຳນວຍການໃຫຍ່
  ກຳມະການສະພາບໍລິຫານ
  ສະມາຊິກຄະນະກຳມະການຄຸ້ມຄອງບໍລິຫານ
  ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ
  ກຳມະການສະພາບໍລິຫານບໍລິສັດ BCEL - KT

## 1. ປະຫວັດການສຶກສາ:

- 2017: ບຳລຸງທິດສະດີການເມືອງ 45 ວັນ ຈາກໂຮງຮຽນ ການເມືອງ - ການປົກຄອງ.
- 1982-1989: ປະລິນຍາໂທ ສາຂາເສດຖະກິດການຄ້າ ຈາກສາທາລະນະລັດເຊັກ

## 2. ປະຫວັດການເຮັດວຽກ:

- 2/2019 - ປະຈຸບັນ: ຮອງຜູ້ອຳນວຍການໃຫຍ່
- 2018 - ປະຈຸບັນ: ກຳມະການສະພາບໍລິຫານ ທຄຕລ, ຄະນະກຳມະການຄຸ້ມຄອງບໍລິຫານ ແລະ ຄະນະກຳມະການກຳນົດຄ່າຕອບແທນ.
- 2015 - ປະຈຸບັນ: ຫົວໜ້າພະແນກຄຸ້ມຄອງສິນເຊື່ອ ແລະ ເປັນກຳມະການສະພາບໍລິຫານບໍລິສັດຫຼັກຊັບ ທຄຕລ-ກຊທ (BCEL-KT)
- 2013 - 2015: ຫົວໜ້າ ທຄຕລ ສາຂາຈຳປາສັກ
- 2011 - 2013: ຫົວໜ້າ ທຄຕລ ສາຂາສາລະວັນ
- 2010 - 2011: ວ່າການຫົວໜ້າ ທຄຕລ ສາຂາສາລະວັນ

- 2007 - 2010: ອ່າການຫົວໜ້າ ທຄຕລ ສາຂາຈຳປາສັກ
- 2005 - 2007: ອ່າການຮອງຫົວໜ້າສາຂາຈຳປາສັກ
- 2003 - 2005: ຫົວໜ້າຂະແໜງສິນເຊື່ອ ສາຂາຈຳປາສັກ
- 2001 - 2002: ຫົວໜ້າໜ່ວຍງານບໍລິການ ສາຂາຈຳປາສັກ
- 1996 - 2000: ພະນັກງານວິຊາການສິນເຊື່ອ ທຄຕລ ສາຂາຈຳປາສັກ